# ມິຊຊາອາທິດທີ 16 ກຳນົດທຳມະດາປີ A

## ວັນທີ 19 ກໍລະກົດ 2020



**ພຣະວໍລະສານ ໂດຍນັກບຸນມັດເທວ 13, 24-43**

ໃນເວລານັ້ນ ພຣະເຢຊູເຈົ້າກ່າວຄວາມປຽບທຽບໃຫ້ປະຊາຊົນຟັງວ່າ: "ອານາຈັກສະຫວັນ ປຽບຄືຄົນຜູ້ໜຶ່ງ ເອົາເຂົ້າປູກແນວດີຫວ່ານລົງໃນນາຂອງຕົນ. ໃນເວລາທີ່ພວກລູກຈ້າງນອນຫລັບ ສັດຕູກໍໄດ້ເອົາເມັດຫຍ້າເຂົ້ານົກມາຫວ່ານປົນກັບເຂົ້າປູກແນວດີ ແລ້ວກໍໜີໄປ. ເມື່ອເຂົ້າອອກຮວງ, ຫຍ້າເຂົ້ານົກກໍປາກົດອອກມາດ້ວຍ. ລູກຈ້າງຈຶ່ງໄປບອກເຈົ້າເຮືອນວ່າ: "ນາຍເອີຍ, ນາຍໄດ້ຫວ່ານເຂົ້າປູກແນວດີໃນນາແມ່ນບໍ? ແລ້ວຫຍ້າເຂົ້ານົກນີ້ມາແຕ່ໃສ?" ນາຍເຈົ້າເຮືອນຕອບວ່າ: "ສັດຕູເອົາມາຫວ່ານໃສ່." ລູກຈ້າງຈຶ່ງຖາມວ່າ: "ນາຍຢາກໃຫ້ໝູ່ຂ້ານ້ອຍໄປຫລົກມັນຖິ້ມບໍ?" ນາຍຕອບວ່າ: "ຢ່າຫລົກມັນ, ຢ້ານວ່າ ເວລາພວກເຈົ້າຫລົກຫຍ້ານັ້ນ ພວກເຈົ້າຈະຫລົກທັງເຂົ້າດີດ້ວຍ. ຈົ່ງປະທັງສອງໄວ້ຈົນຮອດຍາມກ່ຽວ, ແລ້ວເມື່ອເວລາກ່ຽວ, ເຮົາຈະບອກພວກຄົນກ່ຽວວ່າ: ຈົ່ງກ່ຽວເອົາຫຍ້າເຂົ້ານົກກ່ອນ, ແລ້ວມັດໄວ້ເປັນໂຄ້ນໆ, ເພື່ອເອົາໄປສຸມໄຟ, ສ່ວນເຂົ້າດີນັ້ນໃຫ້ຂົນຂຶ້ນໃສ່ເລົ້າຂອງເຮົາ".

ພຣະເຢຊູເຈົ້າ ຍັງກ່າວຄວາມປຽບທຽບ ໃຫ້ປະຊາຊົນຟັງອີກເລື່ອງໜຶ່ງວ່າ: "ອານາຈັກສະຫວັນປຽບໄດ້ກັບເມັດຜັກກາດເມັດໜຶ່ງ, ຊຶ່ງຄົນຜູ້ໜຶ່ງເອົາໄປຫວ່ານລົງໃນສວນຂອງຕົນ. ເປັນເມັດນ້ອຍກວ່າເມັດທຸກຊະນິດ. ເມື່ອມັນງອກເປັນຕົ້ນຂຶ້ນແລ້ວ, ມັນໃຫຍ່ກວ່າພືດຜັກອື່ນໆໃນສວນ, ຈົນກາຍເປັນກົກໄມ້ແລະໝູ່ນົກຕາມອາກາດມາເຮັດຮັງຢູ່ງ່າຂອງມັນໄດ້".

ພຣະອົງຊົງກ່າວຄວາມປຽບທຽບ ໃຫ້ປະຊາຊົນຟັງອີກເລື່ອງໜຶ່ງວ່າ: "ອານາຈັກສະຫວັນ ປຽບໄດ້ກັບເຊື້ອແປ້ງ ທີ່ແມ່ເຮືອນຜູ້ໜຶ່ງເອົາມານວດປະສົມກັບແປ້ງສາມແອ່ງຈົນວ່າແປ້ງທັງໝົດຟູຟອງຂຶ້ນ". ທຸກເລື່ອງນີ້, ພຣະເຢຊູເຈົ້າຊົງກ່າວແກ່ປະຊາຊົນ ແຕ່ທາງປຽບທຽບ, ແລະພຣະອົງບໍ່ກ່າວຫຍັງແກ່ພວກເຂົາໂດຍບໍ່ໃຊ້ຄວາມປຽບທຽບ. ທັງນີ້ກໍເພື່ອໃຫ້ສຳເລັດຕາມຄຳທຳນາຍຂອງປະພາສົກທີ່ວ່າ: "ເຮົາຈະກ່າວແຕ່ຄວາມປຽບທຽບ; ເຮົາຈະປະກາດເລື່ອງລັບລີ້ ຕັ້ງແຕ່ວັນສ້າງໂລກມາ."ເມື່ອໄດ້ສັ່ງໃຫ້ຝູງຄົນກັບໄປແລ້ວ, ພຣະເຢຊູເຈົ້າກໍເຂົ້າໄປໃນເຮືອນແລະພວກສາວົກກໍເຂົ້າມາຫາພຣະອົງທູນວ່າ: "ຂໍພຣະອົງອະທິບາຍແຈ້ງໆໃຫ້ພວກຂ້ານ້ອຍຮູ້ເລື່ອງຫຍ້າເຂົ້ານົກໃນນາ." ພຣະອົງຈຶ່ງກ່າວຕອບພວກເຂົາວ່າ: "ຜູ້ທີ່ຫວ່ານເຂົ້າປູກແນວດີ ແມ່ນບຸດແຫ່ງມະນຸດ; ທົ່ງນາແມ່ນໂລກພິພົບ; ເມັດເຂົ້າປູກແນວດີແມ່ນບຸດແຫ່ງອານາຈັກ; ຫຍ້າເຂົ້ານົກແມ່ນລູກຂອງຜີປີສາດ. ສັດຕູທີ່ມາຫວ່ານຫຍ້າເຂົ້ານົກແມ່ນຜີປີສາດ. ລະດູກ່ຽວແມ່ນວັນສິ້ນພິພົບ. ພວກຄົນກ່ຽວແມ່ນພວກເທວະດາ. ຫຍ້າເຂົ້ານົກໄດ້ຖືກຕັດກ່ຽວແລະຖືກເຜົາໄຟແນວໃດ, ເມື່ອວັນສິ້ນພິພົບກໍຈະເປັນແນວນັ້ນດ້ວຍ. ບຸດແຫ່ງມະນຸດຈະສົ່ງເທວະດາມາຄັດແຍກການສະດຸດທຸກຊະນິດ ແລະຄົນອະທຳທັງຫລາຍອອກຈາກອານາຈັກ,ແລະຈະຖິ້ມພວກເຂົາລົງໃນຂຸມໄຟ; ຢູ່ບ່ອນນັ້ນຈະມີແຕ່ສຽງຮ້ອງໄຫ້ແລະກັດແຂ້ວ. ສ່ວນພວກຊອບທຳ, ພວກເຂົາຈະຮຸ່ງເຮືອງເຫລືອງເຫລື້ອມຄືດວງຕາເວັນໃນອານາຈັກຂອງພຣະເປັນເຈົ້າ. ຜູ້ໃດມີຫູຈົ່ງຟັງເອົາ !"

ນີ້ແມ່ນວາຈາຂອງພຣະຄຣິສໂຕເຈົ້າ

**ບົດແບ່ງປັນ: 13, 24-43**

ອາທິດທີ່ຜ່ານມາ, ພຣະເຢຊູເຈົ້າໄດ້ໃຊ້ຄວາມປຽບທຽບເລື່ອງຜູ້ຫວ່ານເພື່ອໄຂສຳແດງເລື່ອງອານາຈັກສະຫວັນໃຫ້ພວກລູກສິດແລະຝູງຊົນຮູ້ຈັກ. ແນ່ນອນ, ຜູ້ທີ່ອອກໄປຫວ່ານແມ່ນພຣະເຢຊູເຈົ້າ. ເມັດພືດແມ່ນວາຈາແຫ່ງອານາຈັກສະຫວັນ. ຄວາມແຕກຕ່າງຂອງດິນນັ້ນແມ່ນວິທີການຮັບຟັງແລະເຂົ້າໃຈພຣະວາຈາສຳລັບພວກເຮົາແຕ່ລະຄົນ. ສ່ວນດິນດີນັ້ນແມ່ນຜູ້ທີ່ຮັບຟັງວາຈາແຫ່ງອານາຈັກສະຫວັນ ແລະເຂົ້າໃຈ ແລະຜົນທີ່ໄດ້ຮັບຄືຮ້ອຍເທົ່າ, ຫົກສິບເທົ່າ, ສາມສິບເທົ່າ.

ວັນນີ້, ພຣະເຢຊູເຈົ້າສືບຕໍ່ກ່າວຄວາມປຽບທຽບກ່ຽວກັບເລື່ອງອານາຈັກສະຫວັນ. ແຕ່ພຣະອົງໃຊ້ຮູບພາບຜູ້ຫວ່ານແນວເຂົ້າປູກດີ ແລະສັດຕູຜູ້ຫວ່ານຫຍ້າເຂົ້ານົກຢູ່ໃນທົ່ງນາດຽວກັນ. ສິ່ງທຳອິດທີ່ພວກເຮົາສາມາດຮຽນຮູ້ຈາກຄວາມປຽບທຽບນີ້ແມ່ນຫຍ້າເຂົ້ານົກຫລືສິ່ງບໍ່ດີນັ້ນບໍ່ໄດ້ມາຈາກພຣະເຢຊູເຈົ້າ ແຕ່ມາຈາກພະຍາມານ. ເໝືອນກັບໃນຕອນຕົ້ນເມື່ອພຣະເຈົ້າສ້າງໂລກແລະສັບພະສິ່ງທັງຫລາຍ, ສັບພະສິ່ງທີ່ພຣະອົງຊົງສ້າງມາລ້ວນແຕ່ດີງາມທັງໝົດ. ຕໍ່ມາ, ບາບແລະຄວາມຕາຍໄດ້ເຂົ້າມາໃນໂລກຍ້ອນການຫລອກລວງຂອງງູອັນເປັນຮູບພາບຂອງພະຍາມານ. ສິ່ງທີ່ສອງທີ່ພວກເຮົາຮຽນຮູ້ໄດ້ຈາກຄວາມປຽບທຽບເລື່ອງຜູ້ຫວ່ານເຂົ້າປູກດີນີ້ແມ່ນການຢູ່ຮ່ວມກັນລະຫວ່າງເຂົ້າປູກດີແລະຫຍ້າເຂົ້ານົກ. ຫລືເວົ້າອີກຢ່າງແມ່ນການຢູ່ຮ່ວມກັນລະຫວ່າງຄົນດີກັບຄົນບໍ່ດີ, ສິ່ງດີກັບສິ່ງບໍ່ດີຈົນເຖິງເວລາແຫ່ງການເກັບກ່ຽວອັນແມ່ນວາລະສຸດທ້າຍເມື່ອພຣະອົງຈະກັບມາເພື່ອຕັດສິນໂລກ. ເວລານັ້ນ, ພຣະເຢຊູເຈົ້າຈຶ່ງສັ່ງໃຫ້ເທວະດາຂອງພຣະອົງແຍກຄົນບໍ່ດີອອກຈາກຄົນດີ. ຄົນບໍ່ດີຈະຖືກໂຍນອອກນອກບ່ອນທີ່ມີແຕ່ສຽງຮ້ອງໄຫ້ແລະກັດແຂ້ວ. ສ່ວນຄົນດີແມ່ນໄດ້ເຂົ້າໃນອານາຈັກສະຫວັນ. ເປັນຫຍັງພຣະເຢຊູເຈົ້າບໍ່ແຍກຄົນດີອອກຈາກຄົນບໍ່ດີກ່ອນວັນສິ້ນໂລກ? ຍ້ອນພຣະອົງບໍ່ປາດຖະໜາໃຫ້ພວກເຮົາຕ້ອງຖືກຕັດສິນລົງໂທດ, ແຕ່ພຣະອົງລໍຖ້າພວກເຮົາໃຫ້ກັບຈິດປ່ຽນໃຈແລະຫັນມາຫາພຣະອົງ. ຍ້ອນພຣະອົງແມ່ນພຣະເຈົ້າທີ່ບໍ່ຊົງໂກດງ່າຍ, ເຕັມພຽບດ້ວຍຄວາມຮັກເມດຕາແລະພ້ອມໃຫ້ອະໄພພວກເຮົາສະເໝີ.

**ພາວະນາ**

ຂໍໃຫ້ວາຈາພຣະເຈົ້າວັນນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈວ່າ ວັນເວລາທີ່ພຣະອົງໃຫ້ພວກເຮົາມີຊີວິດຢູ່ໃນໂລກນີ້ບໍ່ແມ່ນໃຫ້ພວກເຮົາມົວເມົາແຕ່ນຳຄວາມມ່ວນຊື່ນຢູ່ໃນໂລກນີ້, ແຕ່ເປັນໂອກາດໃຫ້ພວກເຮົາໄດ້ພັດທະນາຕົວເອງ, ຜັນປ່ຽນຊີວິດ, ກັບຈິດປ່ຽນໃຈເພື່ອພວກເຮົາຈະໄດ້ເປັນເຂົ້າປູກດີຂອງພຣະເຢຊູເຈົ້າ. ແນ່ນອນ, ລາງວັນທີ່ພວກເຮົາຈະໄດ້ຮັບນັ້ນຄືອານາຈັກສະຫວັນນັ້ນເອງ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ